# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 17 ພຶສພາ 2020 (05-17-2020)

---

## ຮັບໃຊ້

*ເມື່ອໃດທີ່ທ່ານໄດ້ຮັບການບໍຣິການຮັບໃຊ້ທີ່ເດັ່ນສຸດຍອດ?*

**ຈຸດສຳຄັນໃນບົດຮຽນ:** ຈົ່ງສວຍເອົາໂອກາດຮັບໃຊ້.

**ພຣະຄັມພີຕອບສນອງຕໍ່ຊີວິດ:** ພວກເຮົາທຸກຄົນເຄີຍມີປະສົບການກັບການບໍຣິການລູກຄ້າຊຶ່ງພວກເຮົາຢາກຈະລືມ. ແຕ່ຂ້າພຣະເຈົ້າມັກຈົດຈຳຜູ້ທີ່ເຮັດໃຫ້ຂ້າພຣະເຈົ້າຍິ້ມໄດ້ແທນທີ່ຈະເຮັດໃຫ້ໜ້າຫຍຸ້ງ. ຕົວຢ່າງ, ຄົນຜູ້ນຶ່ງຈອງຕົວຖ້ຽວບິນໃນນາທີສຸດທ້າຍ ຂອງສາຍການບິນຊື່ດັງເພື່ອໄປເຫັນໜ້າຫຼານຊາຍຄັ້ງສຸດທ້າຍກ່ອນຫຼານຈະຕາຍ. ລົດຕິດ ແລະຄິວຍາວທີ່ເດີ່ນບິນເຮັດໃຫ້ລາວມາຮອດປະຕູຊ້າ 12 ນາທີ ຫຼັງຈາກກຳນົດເວລາເຄື່ອງບິນຈະບິນ, ແຕ່ບໍຣິສັດການບິນບອກວ່າຜູ້ໂດຍສານຢູ່ໃນສະພາບເສົ້າໂສກ. ລອງວາດພາບເບິ່ງ, ຄົນນັ້ນໂຜ່ມາໃນເວລາທີ່ນັກບິນກຳລັງຢືນລໍຖ້າລາວຢູ່. ນັກບິນກ່າວວ່າ,"ພວກເຂົາບໍ່ສາມາດໄປໃສໄດ້ໂດຍປາສຈາກຂ້ານ້ອຍ, ແລະຂ້ານ້ອຍກໍບໍ່ສາມາດໄປໃສໄດ້ໂດຍປາສຈາກທ່ານ. ບັດນີ້ ຂໍທ່ານຈົ່ງພັກຜ່ອນ. ພວກເຮົາຈະພາທ່ານໄປເຖິງຈຸດໝາຍ. ແລະຂ້ານ້ອຍກໍຂໍສະແດງຄວາມເສັຍໃຈນຳ."

ການບໍຣິການລູກຄ້າທີ່ດີ ບໍ່ແມ່ນເພື່ອການຂາຍຫຼືຮັກສາລູກຄ້າ. ມັນແມ່ນການເຮັດໃນສິ່ງຖືກຕ້ອງແລະຊ່ອຍຄົນອື່ນ. ພວກເຮົາບໍ່ໄດ້ເວົ້າເຖິງລູກຄ້າຫຼືທຸຣະກິດໃດໆທັງສິ້ນ; ແຕ່ພວກເຮົາເວົ້າເຖິງຄວາມສັມພັນ. ຫຼັກທັມກໍຕ້ອງໄດ້ນຳໃຊ້ຢູ່ດີ: ພວກເຮົາເພີ້ມຄວາມເຂັ້ມແຂງຂອງສາຍສຳພັນຂອງພວກເຮົາຂຶ້ນເວລາເຮົາຊ່ອຍແລະຮັບໃຊ້ຄົນອື່ນໆ. ການຮັບໃຊ້ແມ່ນທາງທີ່ຮັກຄົນອື່ນທີ່ສາມາດສຳພັດໄດ້.

**ພຣະຄັມພີກ່າວວ່າແນວໃດ :** ( ເບິ່ງຕາມຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ຄາລາເຕັຽ 5:13-15</u>.**

*[13] ພວກພີ່ນ້ອງເອີຍ, ທີ່ຊົງເອີ້ນເຈົ້າທັງຫຼາຍກໍເພື່ອໃຫ້ມີເສຣີພາບ ແລະຢ່າເອົາເສຣີພາບນັ້ນເປັນຊ່ອງທາງປ່ອຍຕົວ
ໄປຕາມທັມມະດາໂລກ ແຕ່ຈົ່ງຮັບໃຊ້ ເຊິ່ງກັນແລະກັນດ້ວຍຄວາມຮັກເທີ້ນ. [14]ເພາະວ່າ ພຣະບັນຍັດທັງສິ້ນກໍຮວບ
ຮວມເຂົ້າໃນຂໍ້ດຽວ ຄື "ຈົ່ງຮັກເພື່ອນບ້ານເໝືອນຮັກຕົນເອງ." [15] ແຕ່ວ່າຖ້າເຈົ້າທັງຫຼາຍກັດກັນແລະກິນເນື້ອກັນ
ຈົ່ງລະວັງ ຢ້ານວ່າຈະພາກັນຈິບຫາຍໄປ.*

ອິສຣະພາບເປັນສິ່ງທີ່ມະນຸດຫິວກະຫາຍ. ພວກເຮົາທຸກຄົນຢາກມີອິສຣະພາບ, ແຕ່ຄວາມບາບທ່ວງດຶງເຮົາແລະຈ່ອງດຶງເຮົາດິ່ງລົງສູ່ດິນ. ໃນຄາລາເຕັຽ 5, ເຖິງຢ່າງໃດກໍຕາມ, ທ່ານໂປໂລທວນຄວາມຈຳພວກເຮົາວ່າ ການປະຕິຮູບໄດ້ມີມາໂດຍພຣະເຢຊູ. ຍ້ອນເຄື່ອງຖວາຍບູຊາຄົບສົມບູນຂອງພຣະອົງ, ຣິດຂອງຄວາມບາບໄດ້ພັງທະລາຍລົງ, ແລະ ເຮົາສາມາດເປັນອິສຣະຈາກຄວາມຊົ່ວຊ້າຂອງຄວາມບາບ.

ກ່ອນອື່ນ ເຮົາລອງຍ້ອນໄປເບິ່ງອິສຣະພາບຂອງເຮົາໃນເມື່ອກ່ອນ. ອິສຣະພາບຂອງເຮົາໃນພຣະຄຣິດບໍ່ແມ່ນໃບອະນຸຍາດໃຫ້ເຮົາຍ້ອນກັບໄປດຳຣົງຊີວິດແບບເກົ່າ-ຄືການໃຊ້ຊີວິດກ່ອນທີ່ເຮົາໄດ້ຮັບຄວາມພົ້ນ. ສັງເກດເບິ່ງຄຳວ່າ

*ເນື້ອໜັງໃນຂໍ້ 13.* ນີ້ໝາຍເຖິງທັມມະຊາດບາບຂອງເຮົາ, "ຄົນເກົ່າ" ຍັງຢູ່ໃນເຮົາ, ແມ້ກະທັ້ງພາຍຫຼັງທີ່ເຮົາໄດ້ຮັບຄວາມພົ້ນແລ້ວ. "ເນື້ອໜັງ" ແມ່ນການຈ່ອງດຶງຝ່າຍຮ່າງກາຍຂອງເຮົາເອງຊຶ່ງແຜ່ລາມດັ່ງມະເລງຖ້າເຮົາປ່ອຍໃຫ້ມັນຊັກຈູງເຮົາ. ມັນບໍ່ໄດ້ເປັນເຈົ້າຂອງເຮົາ, ແຕ່ມັນມັກຈະຄິດວ່າເຮົາຍັງເປັນກັມມະສິດຂອງມັນຢູ່. ທ່ານໂປໂລຊາບເຖິງສະພາບບາບເດີມທີ່ຍັງຈ່ອງເຮົາຢູ່ (ໂຣມ7:14-24).

ເປົ້າໝາຍຂອງທັມມະຊາດບາບບໍ່ພຽງແຕ່ທຳລາຍເຮົາ; ມັນເປັນຜົນສະທ້ອນຕໍ່ຄວາມສັມພັນຂອງເຮົານຳ. ຖ້າຂ້າພະເຈົ້າ ແລະທ່ານຕ່າງກໍສຸມໃສ່ຕົວເອງ, ແລ້ວພວກເຮົາຈະມີຄວາມສັມພັນທີ່ແຂງແກ່ນໄດ້ຢ່າງໃດ? ຖ້າເຮົາສຸມໃສ່ແຕ່ຕົວເຮົາເອງ, ບາບຕ່າງໆເຊັ່ນ ສັນດານ, ຄວາມເຫັນແກ່ຕົວ, ຄວາມໂລບ, ແລະຄວາມບໍ່ສົນໃຈກໍຈະໄຫຼຜ່ານຢ່າງໄວແລະທຳໃຫ້ຄວາມສັມພັນຂອງເຮົາເຢັນລົງ. ດັ່ງທີ່ທ່ານໂປໂລໄດ້ເຕືອນວ່າ,*"ຖ້າທ່ານທັງຫຼາຍກັດກັນແລະກິນເນື້ອກັນ ຈົ່ງລະວັງ ຢ້ານວ່າຈະພາກັນຈິບຫາຍໄປ" (ຂໍ້15).*

ທ່ານໂປໂລຊາບອີກວ່າ ຢາຮັກສາເນື້ອກາຍຂນານດຽວ ເຮົາສາມາດຫາໄດ້ໃນຄວາມສັມພັນກັບພຣະຄຣິດ(ຂໍ້25). ສະນັ້ນ ເມື່ອໃດເຮົາປັກຕາໃສ່ພຣະຄຣິດ, ພວກເຮົາກໍຄວນແນໃສ່ພວກທີ່ພຣະເຈົ້ານຳມາສູ່ຊີວິດເຮົາ. ພວກເຮົາຄວນຂຍາຍອິສຣະພາບຂອງເຮົາໃນພຣະຄຣິດ ດ້ວຍການຮັກຄົນອື່ນດ້ວຍທາງການຮັບໃຊ້.

***ການພົວພັນລະຫວ່າງອິສຣະພາບໃນພຣະຄຣິດແລະຄຳສັ່ງໃຫ້ຮັບໃຊ້ແມ່ນຫຍັງ?***

ພຣະເຢຊູເບີ່ງທາງກັບຄືນໄປຫາຄວາມສງ່າງາມຂອງສັງຄົມ. ຜົນສຸດທ້າຍອັນສຸດຍອດຂອງການຕາຍແລະການຄືນພຣະຊົນຂອງພຣະຄຣິດກໍຄື ການໃຫ້ອະພັຍບາບແລະຄວາມສັມພັນກັບພຣະເຈົ້າ, ມັນທັງຈະຊ່ອຍແກ້ໄຂຄວາມຮູ້ສຶກຂອງເຮົາເອງ (ບໍ່ຮູ້ມີຄວາມຜິດອີກ)...ແລະປ່ຽນແປງທິດທາງທີ່ເຮົາຮູ້ສຶກຕໍ່ຄົນອື່ນ. ດຽວນີ້ພວກເຮົາສາມາດຮັກຄົນທັງຫຼາຍ, ແລະພວກເຮົາສະແດງຄວາມຮັກນັ້ນໂດຍການຮັບໃຊ້ພວກເຂົາ. ຄິດເບິ່ງທາງທີ່ທ່ານຮັບໃຊ້ຕົນເອງ.

- ເວລາຮ່າງກາຍຂອງທ່ານຕ້ອງການອາຫານ, ທ່ານກໍຟ້າວໄປຫາຕູ້ເຢັນ.
- ເວລາຮ່າງກາຍຂອງທ່ານຢາກນອນ, ທ່ານກໍແລ່ນຫາໝອນແລະຜ້າຫົ່ມ.
- ເວລາຮ່າງກາຍຂອງທ່ານຮູ້ສຶກຕ້ອງການການອອກກຳລັງກາຍ, ທ່ານກໍຈູງໝາໄປຍ່າງ.

ການ "ຮັບໃຊ້ຕົວເອງ" ແບບນີ້ກໍບໍ່ແມ່ນຊົ່ວຮ້າຍ, ແຕ່ທ່ານໂປໂລທ້າທາຍພວກເຮົາໃຫ້ຮັບໃຊ້ຄົນອື່ນຢ່າງສັດຊື່ຄືກັນກັບຮັບໃຊ້ຕົວເຮົາເອງ. ພວກເຮົາ "ຮັບໃຊ້" ຄວາມຕ້ອງການຂອງເຮົາ. ດ້ວຍເຫດນີ້, ພວກເຮົາກໍສາມາດຮັບໃຊ້ຜູ້ອື່ນໃນເມື່ອເຂົາມີຄວາມຕ້ອງການ. ຈົ່ງທຸ້ມເທໃຈໃສ່ຜູ້ອື່ນຈົນກາຍເປັນນິສັຍ ດັ່ງເຮັດກັບຊີວິດທ່ານເອງ.

## 2. ຄາລາເຕັຽ 6:1-5.

*[1]ພວກພີ່ນ້ອງເອີຍ, ຖ້າຄົນໃດຫາກພົບຄົນທີ່ຫຼົງຜິດປະການໃດ ເຈົ້າທັງຫຼາຍຜູ້ຢູ່ຝ່າຍພຣະວິນຍານ ຈົ່ງຊ່ອຍຄົນຢ່າງນັ້ນດ້ວຍຄວາມອ່ອນສຸພາບໃຫ້ກັບຄືນດີໃໝ່ ໂດຍໃຫ້ທຸກຄົນຄິດເຖິງໂຕເອງ ຢ້ານວ່າຕົນຈະຖືກຊັກຈູງໃຫ້ຫຼົງໄປ. [2]ຈົ່ງຊ່ອຍຮັບພາຣະອັນໜັກຂອງກັນແລະກັນ ຖ້າເຮັດດັ່ງນີ້ພວກເຈົ້າກໍເຮັດຕາມພຣະບັນຍັດຂອງພຣະຄຣິດ. [3]ເພາະວ່າ ຖ້າຜູ້ໃດຖືຕົວວ່າເປັນຜູ້ສຳຄັນໃນເມື່ອຕົນບໍ່ສຳຄັນອັນໃດ ຜູ້ນັ້ນກໍລໍ້ລວງຕົນເອງ. [4]ທຸກຄົນຈົ່ງຊັ່ງນະສູດເບິ່ງການງານຂອງຕົນເອງຈຶ່ງຈະມີສິ່ງເອົາມາອວດອ້າງໄດ້ໃນຕົວເອງ ໂດຍບໍ່ແມ່ນປຽບກັບຜູ້ອື່ນ. [5]ເພາະວ່າທຸກຄົນຕ້ອງຮັບຜິດຊອບຕໍ່ພາຣະຂອງຕົນເອງ.*

ໃນຄາລາເຕັຽບົດ 6 ທ່ານໂປໂລໄດ້ຊີ້ໃຫ້ເຫັນທິດທາງການໃຊ້ເຫື່ອແຮງແລະເວລາທີ່ເກີດຜົນດີກວ່າແມ່ນ: ການຊ່ອຍຄົນອື່ນ. ທ່ານໂປໂລໄດ້ເລີ່ມຕົ້ນດ້ວຍການຊີ້ແຈງທິດທາງຊ່ອຍຄົນອື່ນທີ່ອາດຈະເຮັດໃຫ້ທ່ານຕົກຕະລຶງ: ຈົ່ງ

ຊ່ອຍຄົນອື່ນດ້ວຍການປະເຊີນໜ້າກັບເຂົາໃນຄວາມຮັກ. [1]*ພວກພີ່ນ້ອງເອີຍ, ຖ້າຄົນໃດຫາກພົບຄົນທີ່ຫຼົງຜິດປະການໃດ ເຈົ້າທັງຫຼາຍຜູ້ຢູ່ຝ່າຍພຣະວິນຍານ ຈົ່ງຊ່ອຍຄົນຢ່າງນັ້ນດ້ວຍຄວາມອ່ອນສຸພາບໃຫ້ກັບຄືນດີໃໝ່ໂດຍໃຫ້ທຸກຄົນຄິດເຖິງໂຕເອງ ຢ້ານວ່າຈະຖືກຊັກຈູງໃຫ້ຫຼົງໄປ (ຂໍ້1).*

ບົດບາດນຶ່ງທີ່ສຳຄັນທີ່ສຸດໃນບົດບາດທັງຫຼາຍທີ່ທ່ານສະແດງອອກໃນຊີວິດຂອງຄົນອື່ນແມ່ນຊ່ອຍໃຫ້ເຂົາເຫັນຈຸດບອດຂອງເຂົາ. ຄົນຂັບຣົດສາມາດເຂົ້າໃຈຄວາມຄິດເຫັນນີ້. ຂ້າພຣະເຈົ້າລອດຕາຍມາໄດ້ໃນວິນາທີສຸດທ້າຍດ້ວຍສຽງຮ້ອງດ້ວຍຄວາມຮັກຂອງພັລຍາຂ້າພະເຈົ້າວ່າ: **"ທີ່ຮັກ, ມີຣົດຢູ່ຂ້າງເຈົ້າ!"** ດ້ວຍຄວາມຕົກໃຈ, ຂ້າພະເຈົ້າຮີບຫັກພວງມາລັຍຣົດຄືນທັນທີໂດຍບໍ່ໄດ້ຮັບບາດເຈັບແຕ່ປະການໃດ. ເມື່ອຫົວໃຈຂ້າພະເຈົ້າເຕັ້ນຄ່ອຍລົງເປັນປົກກະຕິແລ້ວ, ຂ້າພະເຈົ້າຈຶ່ງຂອບໃຈຄວາມຕັ້ງໃຈຂອງພັລຍາໄດ້ຊ່ອຍຂ້າພະເຈົ້າແທ້ຈິງ ແລະບໍ່ໃຫ້ຂ້າພະເຈົ້າຫົວໃຈວາຍ! ຂໍຂອບໃຈນາງທີ່ຂ້າພະເຈົ້າໄດ້ຮັບຄຳແຈ້ງເຕືອນ.

***ເຮົາຈະຊ່ອຍຄົນອື່ນໃຫ້ເຫັນຈຸດບອດໄດ້ຢ່າງໃດເພື່ອໃຫ້ຄວາມສັມພັນໝັ້ນແກ່ນຂຶ້ນ?***

ທ່ານໂປໂລທ້າທາຍໃຫ້ຄຣິສຕະຈັກ ຊ່ອຍຄົນອື່ນດ້ວຍຄວາມອ່ອນສຸພາບ, ດ້ວຍຄວາມຮັກ, ແລະດ້ວຍຄວາມເຫັນອົກເຫັນໃຈກັນ ໂດຍການຊ່ອຍໃຫ້ເຂົາເຫັນສິ່ງທີ່ເຂົາເຮັດໃຫ້ຕົນເອງແລະຄົນອື່ນເຈັບປວດ. ຂັ້ນຕອນອັນນີ້ຕ້ອງການການອະທິຖານຫຼາຍ, ແຕ່ຄວນເປັນພາກສ່ວນນຶ່ງຂອງຄວາມສັມພັນທີ່ສົມບູນ. ທ່ານໂປໂລກ່າວຕໍ່ຄອບຄົວທີ່ຮ່ວມຢູ່ໃນຄວາມເຊື່ອໃຫ້ມີການຮັບໃຊ້ໃນຮູບແບບທີ່ສຳພັດໄດ້: [2]*ຈົ່ງຊ່ອຍຮັບພາຣະອັນໜັກຂອງກັນແລະກັນຖ້າເຮັດດັ່ງນີ້ພວກເຈົ້າກໍເຮັດຕາມພຣະບັນຍັດຂອງພຣະຄຣິດ (ຂໍ້2).* ຄວາມສັມພັນທີ່ແຂງແຮງຮຽກຮ້ອງໃຫ້ພວກເຮົາຮັບພາຣະໜັກຂອງກັນແລະກັນ. ການຍົກຍ້າຍໂຊຟາຈະງ່າຍກວ່າຫຼາຍຖ້າມີຄົນຍົກຊ່ອຍ. ມັນຍັງເປັນພາຣະຂອງຂ້າພະເຈົ້າທີ່ຕ້ອງຍົກ, ແຕ່ ຖ້າມີຄູ່ຄອຍຍົກຊ່ອຍກໍຈະເຮັດໃຫ້ເບົາຫຼາຍຂຶ້ນ. ທຳນອງນີ້ ພາຣະໜັກຂອງຂ້າພະເຈົ້າຈະກາຍເປັນພາຣະໜັກຂອງທ່ານເວລາເຮົາຍົກນຳກັນ.

ຈົ່ງສັງເກດມັນໄປທັງສອງທາງ. ທ່ານຊ່ອຍຮັບພາຣະຂອງຂ້າພະເຈົ້າ, ແລະຂ້າພະເຈົ້າຊ່ອຍຮັບພາຣະຂອງທ່ານ. ແນ່ນອນ ສິ່ງນີ້ຮຽກຮ້ອງພາຣະຕົວແລະພາຣະຝ່າຍວິນຍານມີຄວາມສົມດູນກັນ. ໃນທີ່ສຸດຄົນຈະບໍ່ສາມາດຊ່ອຍທ່ານຍົກສິ່ງໃດສິ່ງນຶ່ງໄດ້ ຖ້າເຂົາບໍ່ຮູ້ຈັກສິ່ງນັ້ນ. ໃນຂໍ້3-5, ທ່ານໂປໂລໄດ້ບອກຂ້າພະເຈົ້າໃຫ້ແຍງແວ່ນໃຫ້ເຫັນຄັກໆ. ຂ້າພະເຈົ້າເຫັນພາບພົດຕົວເອງສົມບູນດີບໍ່, ຊໍ່ໃຫ້ເຫັນການຖ່ອມຕົນສາຣະພາບຜິດແລະເປີດຮັບການປັ່ງນແປງບໍ່? ຂ້າພະເຈົ້ານຶກອອກບໍ່ວ່າວັນນຶ່ງຂ້າພະເຈົ້າຈະຕ້ອງຢືນຕໍ່ໜ້າພຣະເຢຊູແລະຕອບຄຳຖາມປະລິມານນ້ຳໜັກທີ່ຂ້າພະເຈົ້າໄດ້ກະທຳ-ຫຼືບໍ່ໄດ້ກະທຳ-ໃນຊີວິດຂອງຄົນອື່ນ? ຂ້າພະເຈົ້າຕ້ອງຮັບພາຣະການຮັບໃຊ້ຂອງຂ້າພະເຈົ້າ.

***ການຮັບພາຣະອັນໜັກຂອງກັນແລະກັນເປັນຄືແນວໃດ?***

## 3. <u>ຄາລາເຕັຽ 6:10</u>.

[10]*ເຫດສັນນັ້ນຕາມທີ່ມີໂອກາດ ໃຫ້ພວກເຮົາເຮັດດີຕໍ່ຄົນທັງປວງ ແລະເປັນຕົ້ນວ່າຕໍ່ຄອບຄົວທີ່ຮ່ວມຢູ່ໃນຄວາມເຊື່ອ.*

ທ່ານໂປໂລເປີດເຜີຍໃຫ້ຮູ້ໃນ (ຂໍ້7) ວ່າ:*"ຜູ້ໃດຫວ່ານສິ່ງໃດລົງ ກໍຈະເກັບກ່ຽວສິ່ງນັ້ນ."* ສຳລັບເຫດຜົນນີ້ເອງ, ຄຣິສຕຽນຖືກທ້າທາຍໃຫ້ຫວ່ານເມັດໃນທົ່ງນາຕລອດໄປເປັນນິດຂອງສັງຄົມຄຣິສຕຽນ.ໃນ (ຂໍ້10), ທ່ານໂປໂລໄດ້ຢ້ຳເຖິງຄວາມຕ້ອງການສະແດງຄວາມຮັກຕໍ່ທຸກຄົນ, ແຕ່ເພິ່ນເນັ້ນໜັກຄວາມສຳຄັນການລົງທຶນຂອງຄຣິສຕຽນຕໍ່ຄອບຄົວທີ່ຮ່ວມຢູ່ໃນຄວາມເຊື່ອ. ຄວາມສັມພັນພາຍໃນໂບດຖືກຍົກຂຶ້ນສູ່ລະດັບສູງສຸດ. ນີ້ບໍ່ໄດ້ໝາຍຄວາມວ່າພວກເຮົາຈະເມີນເສີຍຕໍ່ຄວາມຈຳເປັນຂອງຄົນນອກພຣະກາຍພຣະຄຣິດ. ການຫວ່ານເມັດລົງໃນຊີວິດຄົນຫຼົງຫາຍກໍສຳຄັນ

ເຊັ່ນດຽວກັນ. ດັ່ງດຽວກັນກັບຄົນດູແລຍາດພີ່ນ້ອງຂອງຕົນກ່ອນດູແລເພື່ອນບ້ານຂອງຕົນ (1 ຕີໂມທຽວ 5:8), ຜູ້ເຊື່ອຕ້ອງແນ່ໃຈວ່າໄດ້ດູແລອ້າຍເອື້ອຍນ້ອງໃນພຣະຄຣິດ. ການຮັບໃຊ້ນີ້ຈະເປັນພະຍານແກ່ຄົນພາຍນອກໂບດ.

ທ່ານໂປໂລໄດ້ຍອມຮັບວ່າຊາວຄຣິສຕຽນໃນຄາລາເຕັຽໄດ້ປະຕິບັດຕໍ່ຊຶ່ງກັນແລະກັນເປັນປະຈຳ. ການຢູ່ຮ່ວມເປັນກາຍອັນດຽວໃນຄວາມເຊື່ອເປັນປັດຈັຍສຳຄັນຕໍ່ຄວາມຈະເຣີນເຕີບໃຫຍ່ຝ່າຍວິນຍານ. ມັນຄວນດຳເນີນໄປໂດຍບໍ່ໄດ້ເວົ້າວ່າ: ນຶ່ງໃນບັນດາເງື່ອນໄຂເບື້ອງຕົ້ນສຳລັບຄວາມສັມພັນທີ່ມີສຸຂພາບດີແມ່ນການປາກົດຕົວຕໍ່ເນື່ອງໃນຊີວິດຂອງຄົນອື່ນ. ມັນເປັນການທ້າທາຍຢ່າງໃຫຍ່ໃນການຮັບໃຊ້ບຸກຄົນທີ່ທ່ານບໍ່ຄ່ອຍໄດ້ນັ່ງຫຼືເວົ້ານຳ, ບຸກຄົນທີ່ທ່ານໜ້ອຍໜັກທີ່ຈະໄດ້ພົວພັນພົບປະສົນທະນານຳ. ແທ້ຈິງແລ້ວ, ສຳລັບຄົນບາງຈຳພວກ, ບາດກ້າວແລກຂອງການປະຕິບັດຕາມພຣະຄຳຄາລາເຕັຽ 6:10 ແມ່ນຈົ່ງປາກົດຕົວໃຫ້ຫຼາຍກວ່າເກົ່າ!

ໃນເມື່ອທ່ານເອົາຕົວເຂົ້າຮ່ວມແວດວົງກຸ່ມນ້ອຍໆເປັນປະຈຳ, ແລ້ວທ່ານໂປໂລຈະທ້າຍທາຍທ່ານໃຫ້ຕໍ່ຕ້ານແລະຊຸກຍູ້ໃຫ້ທ່ານເລີກເສັງໃນການພຽງແຕ່ນັ່ງເສົ້າເຫງົາຊຶມຊື່ໆ! ບໍ່ຕ້ອງລໍຖ້າການເຊື້ອເຊີນໃຫ້ຮັບໃຊ້, ແຕ່ຈົ່ງສແວງຫາໂອກາດເຮັດດີຕໍ່ຊີວິດຄົນອື່ນ. ໂອກາດການຮັບໃຊ້ບໍ່ມີສິ້ນສຸດຈັກເທື່ອ. ເມື່ອຄຣິສຕຽນຕຽມພ້ອມຮັບໃຊ້ສະຖານະການທຸກຢ່າງທີ່ເຂົາຕ້ອງການ, ທາງທີ່ສລາດທີ່ສຸດໃນການຮັບໃຊ້ຄົນອື່ນແມ່ນເປີດຄັງພຣະພອນຝ່າຍວິນຍານທີ່ທ່ານມີຢູ່. ຈົ່ງພິຈາຣາເບິ່ງໃນການຮັບໃຊ້ວ່າພຣະວິນຍານບໍຣິສຸດໄດ້ຈັດຕຽມທ່ານສຳລັບການຮັບໃຊ້ແລະໃຊ້ຂອງປະທານແລະຄວາມສາມາດໃນການຮັບໃຊ້ເພື່ອຕອບສນອງກັບຄວາມຕ້ອງການທີ່ລຽນແຖວຢູ່ຕໍ່ໜ້າທ່ານຢ່າງໃດ? ສ່ວນຍັງຄ້າງຄາທີ່ເຮົາຕ້ອງເຮັດແມ່ນເປີດໃຈຂອງເຮົາແລະເປີດຕາຂອງເຮົາໃຫ້ເຫັນຄວາມຕ້ອງການແລະໂອກາດ, ແລະຈົ່ງອອກໄປເຮັດ!

| |
|---|
| ***ໂອກາດອັນໃດທີ່ກຸ່ມຂອງເຮົາຕ້ອງຮັບໃຊ້ຄົນອື່ນໃນໂບດແລະໃນຊຸມຊົນຂອງເຮົາ?*** |

**ນຳໃຊ້ໃນຊີວິດ**

ພຣະເຈົ້ານຳພາທ່ານໃຫ້ໄປຮັບໃຊ້ຢູ່ໃສ? ຈົ່ງເລືອກການນຳໃຊ້ອັນນຶ່ງຕໍ່ລົງໄປນີ້:

- **ຈົ່ງຂອບໃຈຄົນໃດຄົນນຶ່ງ.** ຈົ່ງຮັບຮູ້ຜູ້ທີ່ຮັບໃຊ້ທ່ານ,ຄືຜູ້ໄດ້ສູ້ຊົນຕໍ່ທ່ານໃນຄວາມຮັກ, ຫຼືຊ່ອຍທ່ານແບ່ງເບົາພາຣະໜັກ. ຈົ່ງຕິດຕໍ່ລາວແລະສະແດງຄວາມຂອບໃຈລາວ.
- **ຈົ່ງຜູກຄວາມສັມພັນບາງບຸກຄົນຄືນໃໝ່.** ຖ້າເພື່ອນຫຼືຄົນໃນຄອບຄົວຜູ້ໃດຜູ້ນຶ່ງກຳລັງຕົກຢູ່ທ່າມກາງການປະພຶດບາບຫຼືແລະຕັດສິນໃຈໃນທາງຊົ່ວ, ຈົ່ງ ທູນຂໍປັນຍາຈາກພຣະເຈົ້າແລະນຳພາໄປໃນທາງທີ່ດີທີ່ສຸດເພື່ອໂອ້ລົມກັບຜູ້ກ່ຽວດ້ວຍຄວາມຮັກ. ຈົ່ງເລີ້ມຕົ້ນອະທິຖານ.
- **ຈົ່ງຮັບໃຊ້ຄົນໃດຄົນນຶ່ງ.** ພາຍໃນກຸ່ມ, ຈົ່ງຫາຜູ້ໃດຜູ້ນຶ່ງທີ່ທ່ານສາມາດ ເດີນຄຽງບ່າຄຽງໄຫຼ່ແລະຊ່ອຍຮັບພາຣະໜັກຂອງເຂົາ. ຈົ່ງໃຊ້ສິ່ງນີ້ໃຫ້ເປັນໂອກາດຮັກແລະນຳເຂົາມາສູ່ກຸ່ມຂອງທ່ານ.

ໃຫ້ເຮົາດຳຣົງຊີວິດຢ່າງນີ້, ເມື່ອຄົນຄິດຫາປະສົບການອັນຍິ່ງໃຫຍ່ໃນການຮັບໃຊ້, ເຂົາບໍ່ຄິດເຖິງການບໍຣິການລູກຄ້າ; ເຂົາຄິດເຖິງການຮັບໃຊ້ຂອງຄຣິສຕຽນ!

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ໂດຍ PSI**